ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດປະຊາທິປະໄຕ ເອກະພາບວັດທະນະຖາວອນ

ແຂວງຊຽງຂວາງ

ເລກທີ 168/ຈຂ.ຊຂ
ຊຽງຂວາງ, ວັນທີ 05.03 2019

# ຂໍ້ຕົກລົງ
# ວ່າດ້ວຍ ການສົ່ງເສີມວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ຂອງແຂວງຊຽງຂວາງ

- ອີງຕາມ ກົດໝາຍ ວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍ ວ່າດ້ວຍ ການສົ່ງເສີມ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ເລກທີ11/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມ ມະຕິກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາປະຊາຊົນແຂວງຊຽງຂວາງ ຊຸດທີ I ສະບັບເລກທີ 07/ສພຂ.ຊຂ, ລົງວັນທີ 29 ມັງກອນ 2019;
- ອີງຕາມ ໜັງສືສະເໜີ ຂອງຄະນະປະຈຳສະພາປະຊາຊົນແຂວງ ສະບັບເລກທີ 14 /ສພຂ.ຊຂ, ລົງວັນທີ 25 ກຸມພາ 2019.

**ເຈົ້າແຂວງ ຕົກລົງ:**

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ການຕິດຕາມ, ກວດກາ ການສົ່ງເສີມວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງຂອງແຂວງ ໃຫ້ສາມາດດຳເນີນທຸລະກິດ ຢ່າງກວ້າງຂວາງ ແບບຄອບຄົວ, ເປັນກຸ່ມ, ບຸກຄົນ, ນິຕິບຸກຄົນ ເຂົ້າໃນການຜະລິດ, ການປຸງແຕ່ງ, ການຄ້າ ແລະ ການບໍລິການ ຫັນໄປສູ່ການຜະລິດແບບອຸດສາຫະກຳ ແນໃສ່ຮັບປະກັນທາງດ້ານປະລິມານ, ຄຸນນະພາບ ແລະ ລາຄາ ເພື່ອສາມາດແຂ່ງຂັນ ແລະ ຕອບສະໜອງ ຄວາມຕ້ອງການຂອງຕະຫຼາດຢ່າງພຽງພໍ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ແລະ ປົກປັກຮັກສາສະພາບແວດລ້ອມຂອງແຂວງ ຕາມທິດສີຂຽວ, ສະອາດ ແລະ ຍືນຍົງ.

**ມາດຕາ 2 ການສົ່ງເສີມ ວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ**

ການສົ່ງເສີມ ວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ແມ່ນການສ້າງໂອກາດ ແລະ ເງື່ອນໄຂໃຫ້ບັນດາຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ຮູ້ຈັກ ແລະ ມີຄວາມຊຳນານ ກ່ຽວກັບການຜະລິດ, ການປຸງແຕ່ງ, ການຄ້າ ແລະ ການບໍລິການເຂົ້າເຖິງ ດ້ານພູມປັນຍາ, ເຕັກນິກ, ເຕັກໂນໂລຊີ, ການຕະຫຼາດ ແລະ ແຫຼ່ງທຶນ ເພື່ອຫັນເປັນສິນຄ້າໃຫ້ໄດ້ຕາມຄວາມຕ້ອງການຂອງຕະຫຼາດ ແລະ ຜູ້ບໍລິໂພກ.

**ມາດຕາ 3 ນະໂຍບາຍສົ່ງເສີມ ວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ**

ແຂວງ ຊຸກຍູ້, ສົ່ງເສີມ ການພັດທະນາວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ດ້ວຍການສະໜັບສະໜູນ ດ້ານທຶນຮອນທາງກົງ ແລະ ທາງອ້ອມ, ການຝຶກອົບຮົບວິຊາການ, ການນຳໃຊ້ເຕັກໂນໂລຊີ, ການຊອກຫາຕະຫຼາດ, ການສ້າງມາດຕະຖານສິນຄ້າ ແລະ ອື່ນໆ.

ແຂວງ ຊຸກຍູ້, ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ, ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ລົງທຶນດຳເນີນທຸລະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ດ້ວຍການຈັດສັນທີ່ດິນ ໃຫ້ເຊົ່າ ຫຼື ສຳປະທານ ເພື່ອທຳການຜະລິດ, ການສ້າງໂຮງງານປຸງແຕ່ງ, ສາງເກັບມ້ຽນສິນຄ້າ, ການນຳເຂົ້າ ວັດຖຸອຸປະກອນ, ເຄື່ອງຈັກ, ພາຫະນະ, ເຄື່ອງມື, ວັດຖຸດິບ, ແນວພັນ ແລະ ອື່ນໆ ເພື່ອທຳການຜະລິດ, ການປຸງແຕ່ງ, ການຄ້າ ແລະ ການບໍລິການ ໂດຍສອດຄ່ອງກັບກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ກ່ຽວຂ້ອງ.

ແຂວງຊຸກຍູ້, ສົ່ງເສີມໃຫ້ ຄອບຄົວປະຊາຊົນພາຍໃນແຂວງ ດຳເນີນການຜະລິດ, ການປຸງແຕ່ງ, ການຄ້າ ແລະ ການບໍລິການ ໃນຮູບແບບຄອບຄົວ, ກຸ່ມ, ສະຫະກອນ ແລະ ຮູບແບບອື່ນໆ ຕາມຄວາມເໝາະສົມ.

**ມາດຕາ 4 ອະທິບາຍຄຳສັບ**

ບາງຄຳສັບ ທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

- **ວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ** ໝາຍເຖິງ ຫົວໜ່ວຍດຳເນີນທຸລະກິດ ທີ່ຂຶ້ນທະບຽນຕາມຂະໜາດຂອງທຶນ, ຈຳນວນພົນ ແລະ ລາຍຮັບ ໃນແຕ່ລະປີ ເປັນສິ່ງວັດແທກ ໂດຍແມ່ນລັດຖະບານເປັນຜູ້ກຳນົດ ໃນແຕ່ລະໄລຍະ ເຊິ່ງຂຽນຫຍໍ້ເປັນຕົວອັກສອນລາວ "ວນກ" ແລະ ເປັນຕົວອັກສອນອັງກິດ "SME" Small and Medium Enterprises;
- **ຜະລິດຕະພາບ** ໝາຍເຖິງ ປະສິດທິພາບ ແລະ ປະສິດທິຜົນ ຂອງການເຄື່ອນໄຫວດຳເນີນທຸລະກິດ, ການຜະລິດ ໂດຍເປັນການປຽບທຽບ ລະຫວ່າງ ຜົນໄດ້ຮັບ ແລະ ປັດໃຈ ລົງທຶນໃສ່ ທຸລະກິດ ເຊັ່ນ: ແຮງງານ, ທຶນ, ວັດຖຸດິບ ແລະ ເວລາ;
- **ນະວັດຕະກຳ** ໝາຍເຖິງ ການປະດິດສ້າງສິ່ງໃໝ່ໆ ທີ່ບໍ່ເຄີຍມີມາກ່ອນ ຫຼື ເປັນການພັດທະນາດັດແປງຈາກຂອງເດີມ ທີ່ມີຢູ່ແລ້ວ ໃຫ້ເປັນທັນສະໄໝ ແລະ ມີຄຸນນະພາບດີກວ່າເກົ່າ;
- **ສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນ** ໝາຍເຖິງ ສິນຄ້າ ທີ່ເປັນບູລິມະສິດ ແລະ ໂດດເດັ່ນ ຂອງເມືອງ ທີ່ຮັບປະກັນທາງດ້ານປະລິມານ, ຄຸນນະພາບ ແລະ ມີຊື່ສຽງ ຂຽນຫຍໍ້ດ້ວຍອັກສອນອັງກິດ "ODOP" One District One Product.

**ມາດຕາ 5 ຫຼັກການ ການສົ່ງເສີມ ວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ**

ຫຼັກການ ການສົ່ງເສີມ ວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ມີດັ່ງນີ້:

1. ສອດຄ່ອງກັບ ລັດຖະທຳມະນູນ, ກົດໝາຍ ແລະ ບັນດານິຕິກຳໃຕ້ກົດໝາຍ ກ່ຽວກັບວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ;
2. ສອດຄ່ອງກັບແນວທາງນະໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ຮັບປະກັນຕາມທິດສີຂຽວ, ສະອາດ ແລະ ຍືນຍົງ;
3. ສອດຄ່ອງກັບລະດັບ ແລະ ຂະແໜງການວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ;
4. ສະດວກ, ວ່ອງໄວ, ສະເໝີພາບ, ໂປ່ງໃສ, ຍຸຕິທຳ ແລະ ເອກະພາບໃນທົ່ວແຂວງ;
5. ຫັນເປັນເຄິ່ງທັນສະໄໝ ຫຼື ທັນສະໄໝ ແລະ ກ້າວໄປສູ່ ການຫັນເປັນອຸດສາຫະກຳເທື່ອລະກ້າວ;
6. ຮັບປະກັນ ຜົນປະໂຫຍດທາງດ້ານເສດຖະກິດ ຂອງການດຳເນີນທຸລະກິດ ໂດຍບໍ່ໃຫ້ມີຜົນກະທົບທາງລົບຕໍ່ສິ່ງແວດລ້ອມ, ທຳມະຊາດ ແລະ ສັງຄົມ;
7. ນຳໃຊ້ຊັບພະຍາກອນທຳມະຊາດຢ່າງມີປະສິດທິຜົນ ແລະ ຫັນໄປສູ່ທຸລະກິດພູມປັນຍາເທື່ອລະກ້າວ.

ມາດຕາ 6 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ຢູ່ແຂວງຊຽງຂວາງ.

## ໝວດທີ II
## ຂະແໜງ ແລະ ການສົ່ງເສີມ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ.

ມາດຕາ 7 ຂະແໜງວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ.

ຂະແໜງວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ທີ່ແຂວງສົ່ງເສີມ ມີດັ່ງນີ້:

1. ການຜະລິດ: ດ້ານການປູກຝັງ, ລ້ຽງສັດ ແລະ ອຸດສາຫະກຳ.
2. ການປຸງແຕ່ງ: ຜະລິດຕະພັນຈາກກະສິກຳ, ສັດລ້ຽງ, ຊັບພະຍາກອນທຳມະຊາດ, ການນຳໃຊ້ວັດຖຸດິບພາຍໃນ ຫຼື ນຳເຂົ້າ ຈາກຕ່າງປະເທດ.
3. ການຄ້າ: ຕະຫຼາດ, ຮ້ານຈຳໜ່າຍສິນຄ້າ, ຮ້ານຄ້າເຄື່ອນທີ່, ການນຳເຂົ້າ ແລະ ສົ່ງອອກສິນຄ້າ.
4. ການບໍລິການ: ການຈໍລາຈອນແຈກຢາຍສິນຄ້າ, ການຂົນສົ່ງ, ການທ່ອງທ່ຽວ, ໂຮງແຮມ, ຮ້ານອາຫານ, ສະຖານທີ່ບັນເທີງ, ການຮັບຝາກລົດ, ສາງ ແລະ ການບໍລິການອື່ນໆ.

ມາດຕາ 8 ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ໜາດກາງທີ່ເປັນຈຸດສຸມ

ແຂວງ ຊຸກຍູ້, ສົ່ງເສີມ ຂະແໜງທຸລະກິດທີ່ເປັນຈຸດສຸມຄື:

**1. ການຜະລິດກະສິກຳ:**

- ການປູກຝັງ: ປູກຜັກອິນຊີ, ເຂົ້າໄກ່ນ້ອຍ, ສາລີ, ຊາ, ກາເຟ, ໝາກເຜັດນ້ອຍ, ພັກທຽມ, ໝາກງາຂາວ, ຂີງ, ຖົ່ວດິນ, ດອກໄມ້, ປູກມອນ-ລ້ຽງມ້ອນ, ພືດສະໝຸນໄພ ແລະ ໝາກໄມ້ເຂດໜາວ;
- ການລ້ຽງສັດ: ສັດພື້ນເມືອງ, ສັດໃຫຍ່ເປັນສິນຄ້າ, ລ້ຽງເຜິ້ງ, ລ້ຽງໝູລາດ ແລະ ໄກ່ຊີ້ນດຳ;

2. ການປຸງແຕ່ງ: ໂຮງງານຂ້າສັດ, ໂຮງງານປຸງແຕ່ງນົມ, ໂຮງງານແປຮູບຊີ້ນ, ໂຮງງານປຸງແຕ່ງອາຫານ, ໂຮງງານຫຸ້ມຫໍ່, ສາງເຢັນ ແລະ ໂຮງອົບພືດກະສິກຳ;

3. ການຄ້າ: ຮ້ານຄ້າສະອາດ, ຕະຫຼາດສະອາດ, ຂາຍຍົກ-ຂາຍຍ່ອຍ, ການຈັດງານວາງສະແດງສິນຄ້າ, ໂຄສະນາສິນຄ້າພູມປັນຍາ, ການສົ່ງອອກ ແລະ ນຳເຂົ້າສິນຄ້າ;

4. ການບໍລິການ: ໂຮງແຮມ, ຮ້ານອາຫານພື້ນເມືອງ, ອາຫານສາກົນ, ການທ່ອງທ່ຽວ, ການບໍລິການຂົນສົ່ງທ່ອງທ່ຽວ, ການພັດທະນາແຫຼ່ງທ່ອງທ່ຽວທຸກປະເພດ, ການຈໍລາຈອນສິນຄ້າ.

## ໝວດທີ III
## ການຄຸ້ມຄອງການສົ່ງເສີມ ວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ

ມາດຕາ 9 ການຄຸ້ມຄອງ

ແຂວງ ຄຸ້ມຄອງ ການສົ່ງເສີມວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ຢ່າງລວມສູນ ແລະ ເປັນເອກະພາບ ໃນທົ່ວແຂວງ ໂດຍມອບໃຫ້ ພະແນກອຸດສາຫະກຳ ແລະ ການຄ້າແຂວງ ເປັນໃຈກາງ ໃນການປະສານສົມທົບກັບ ບັນດາຂະແໜງການກ່ຽວຂ້ອງຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ມາດຕາ 10 ອົງການຄຸ້ມຄອງ ການສົ່ງເສີມວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ

ອົງການຄຸ້ມຄອງແຂວງ ກ່ຽວກັບການສົ່ງເສີມວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ມີດັ່ງນີ້:

1. ພະແນກອຸດສາຫະກຳ ແລະ ການຄ້າແຂວງ;
2. ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ;
3. ໜ່ວຍງານເສດຖະກິດ ແລະ ການເງິນບ້ານ.

**ມາດຕາ 11 ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ**

ພະແນກອຸດສາຫະກຳ ແລະ ການຄ້າແຂວງ ມີສິດ ແລະ ໜ້າທີ່ ໃນການຄຸ້ມຄອງ ການສົ່ງເສີມວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໂດຍສະເພາະແມ່ນ ຂໍ້ຕົກລົງສະບັບນີ້ ໃຫ້ປະຊາຊົນ ແລະ ບັນດາຜູ້ສົນໃຈ ເພື່ອເຂົ້າຮ່ວມ ການລົງທຶນ ດຳເນີນວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ຢ່າງກວ້າງຂວາງ ແລະ ເປັນປົກກະຕິ;
2. ຈັດຝຶກອົບຮົມ ກ່ຽວກັບ ການສ້າງຕັ້ງວິສາຫະກິດ, ເຕັກນິກ, ວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກຳ, ຄວາມຮູ້, ບົດຮຽນ ແລະ ປະສົບການຕ່າງໆ ໃຫ້ ຜູ້ສົນໃຈ ແລະ ຜູ້ປະກອບການວິສາຫະກິດ ເປັນປົກກະຕິ;
3. ສະໜອງ ຂໍ້ມູນ-ຂ່າວສານ, ໃຫ້ ຄຳປຶກສາ, ຈັດສົ່ງ ວິຊາການລົງຊີ້ນຳ ແລະ ນຳພາຈັດຕັ້ງປະຕິບັດໂດຍກົງ ຕາມການສະເໜີ ຂອງຜູ້ປະກອບການ;
4. ຊີ້ນຳ, ຄຸ້ມຄອງ, ຕິດຕາມ, ກວດກາ, ປະເມີນຜົນ ແລະ ສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານສົ່ງເສີມ ວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ໃຫ້ ຂັ້ນເທິງ ຢ່າງເປັນປົກກະຕິ;
5. ຄົ້ນຄວ້າ ແລະ ມີຄຳເຫັນ ຕໍ່ກັບການສະເໜີ ໃນການລົງທຶນດຳເນີນວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ຢູ່ພາຍໃນແຂວງ;
6. ສະເໜີ ບຳລຸງ, ກໍ່ສ້າງ, ຍົກລະດັບຄວາມຮູ້, ຄວາມສາມາດ, ວິຊາການ ກ່ຽວກັບ ການຄຸ້ມຄອງການສົ່ງເສີມວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ໃຫ້ບຸກຄະລາກອນ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ;
7. ຄົ້ນຄວ້າ ແລະ ມີຄຳເຫັນ ເພື່ອແກ້ໄຂ ຂໍ້ຂັດແຍ່ງດ້ານບໍລິຫານ ທີ່ເກີດຂຶ້ນ ຈາກການດຳເນີນວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ຢູ່ພາຍໃນແຂວງ;
8. ປຸກລະດົມ, ຂົນຂວາຍ, ຍາດແຍ່ງທຶນຮອນ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຊຸກຍູ້ ວຽກງານຄຸ້ມຄອງການສົ່ງເສີມວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ໃຫ້ມີຄຸນນະພາບ;
9. ປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ກັບວຽກງານສົ່ງເສີມວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ໃຫ້ໄດ້ຮັບຜົນດີ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 12 ສິດ ແລະ ໜ້າທີ່ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ**

ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ນະໂຍບາຍ ແລະ ຈັດຕັ້ງປະຕິບັດ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ໂດຍສະເພາະແມ່ນ ຂໍ້ຕົກລົງສະບັບນີ້ ໃຫ້ປະຊາຊົນ ແລະ ບັນດາຜູ້ສົນໃຈ ເພື່ອເຂົ້າຮ່ວມ ການລົງທຶນ ດຳເນີນວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ພາຍໃນເມືອງຂອງຕົນ;
2. ຕິດຕາມ, ກວດກາ, ຊຸກຍູ້, ປະເມີນຜົນ, ສະຫຼຸບ ແລະ ລາຍງານ ການດຳເນີນວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ພາຍໃນເມືອງຂອງຕົນ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

3. ສະເໜີ ບຳລຸງກໍ່ສ້າງ, ຍົກລະດັບຄວາມຮູ້, ຄວາມສາມາດໃຫ້ ບຸກຄະລາກອນພາຍໃນເມືອງຂອງຕົນ;

4. ເຂົ້າຮ່ວມ ຊຸດຝຶກອົບຮົມ ກ່ຽວກັບ ການສົ່ງເສີມວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ຕາມການເຊີນ;

5. ປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຮ່ວມມື ໃນການຈັດຕັ້ງປະຕິບັດ ການສົ່ງເສີມວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ພາຍໃນເມືອງຂອງຕົນ ໃຫ້ໄດ້ຮັບຜົນດີ;

6. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 13 ສິດ ແລະ ໜ້າທີ່ ຂອງໜ່ວຍງານເສດຖະກິດ ແລະ ການເງິນບ້ານ**

ໜ່ວຍງານເສດຖະກິດ ແລະ ການເງິນບ້ານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ກົດໝາຍ, ນິຕິກຳໃຕ້ກົດໝາຍ, ຂໍ້ມູນ-ຂ່າວສານ ແລະ ລະບຽບການ ກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ໃຫ້ປະຊາຊົນ, ຜູ້ປະກອບການ ເພື່ອຊຸກຍູ້ໃຫ້ເຂົ້າຮ່ວມການຈັດຕັ້ງປະຕິບັດ ຕົວຈິງ;

2. ຕິດຕາມ, ກວດກາ ແລະ ລາຍງານ ສະພາບການເຄື່ອນໄຫວ ຂອງຫົວໜ່ວຍວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ທີ່ຕັ້ງຢູ່ ບ້ານຂອງຕົນ ໃຫ້ ເມືອງ ເປັນປົກກະຕິ;

3. ແນະນຳ, ປຸກລະດົມ ປະຊາຊົນ ແລະ ຜູ້ປະກອບການ ທີ່ດຳເນີນທຸລະກິດ ໃນລະດັບວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ທີ່ບໍ່ທັນໄດ້ຂຶ້ນທະບຽນ ໃຫ້ ປະກອບເອກະສານ ສະເໜີ ຂະແໜງອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ ຫຼື ແຂວງ ເພື່ອຂໍຂຶ້ນທະບຽນ ໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ຂໍ້ຕົກລົງສະບັບນີ້.

## ໝວດທີ IV
## ການສົ່ງເສີມສະເພາະ ວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ

**ມາດຕາ 14 ການສົ່ງເສີມສະເພາະ**

ແຂວງ ສົ່ງເສີມສະເພາະ ໃຫ້ ວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ດ້ວຍ 8 ເງື່ອນໄຂ ດັ່ງນີ້:

1. ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ;
2. ການເຂົ້າເຖິງແຫຼ່ງທຶນ;
3. ການຜ່ອນຜັນດ້ານພາສີ, ອາກອນ ແລະ ພັນທະຕ່າງໆ;
4. ການສ້າງຕັ້ງ ແລະ ພັດທະນາຜູ້ປະກອບກິດຈະການໃໝ່;
5. ການເຂົ້າເຖິງ ການບໍລິການໃຫ້ຄຳປຶກສາ;
6. ການເພີ່ມຜະລິດຕະພາບ, ເຕັກໂນໂລຊີ ແລະ ນະວັດຕະກຳ;
7. ການເຂົ້າເຖິງ ແລະ ຂະຫຍາຍຕະຫຼາດ;
8. ການປົກປ້ອງລາຄາສິນຄ້າ ແລະ ຄ່າບໍລິການ.

**ມາດຕາ 15 ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ**

ແຂວງ ສ້າງ ສະພາບແວດລ້ອມທີ່ເອື້ອອຳນວຍ ໃຫ້ ການສ້າງຕັ້ງ ແລະ ດຳເນີນທຸລະກິດ ດ້ວຍການສ້າງ, ປັບປຸງ ນິຕິກຳໃຕ້ກົດໝາຍ, ລະບຽບການ ແລະ ມາດຕະການຕ່າງໆ ທີ່ເປັນເຄື່ອງມື ເພື່ອຫຼຸດຜ່ອນຂັ້ນຕອນອະນຸມັດ ແລະ ບັນດາສິ່ງກີດຂວາງຕ່າງໆ ທີ່ເປັນອຸປະສັກໃຫ້ການສ້າງຕັ້ງ ແລະ ການດຳເນີນທຸລະກິດ.

ການປະກອບເອກະສານ ຂໍສ້າງຕັ້ງ ຫຼື ຕໍ່ອາຍຸ ວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ແມ່ນປະຕິບັດ ຕາມ ຂໍ້ຕົກລົງ ວ່າດ້ວຍ ການຂຶ້ນທະບຽນວິສາຫະກິດ ເລກທີ 0023/ອຄ.ກທຄວ ລົງວັນທີ 09 ມັງກອນ 2019.

**ມາດຕາ 16 ການເຂົ້າເຖິງແຫຼ່ງທຶນ**

ແຂວງ ສ້າງໂອກາດ ແລະ ເອື້ອອຳນວຍຄວາມສະດວກ ໃຫ້ປະຊາຊົນ ແລະ ຜູ້ດຳເນີນວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ສາມາດເຂົ້າເຖິງ ແຫຼ່ງທຶນ ດ້ວຍການສະໜອງ ທຶນສົ່ງເສີມວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ທີ່ລັດຖະບານ ຈັດສັນໃຫ້, ທຶນສະໜັບສະໜູນ ຫຼື ທຶນຊ່ວຍເຫຼືອ ຈາກ ຕ່າງປະເທດ ແລະ ນິຕິກຳສະເພາະ ໃນການກູ້ຢືມ ຈາກທະນາຄານ ຫຼື ສະຖາບັນການເງິນ.

**ມາດຕາ 17 ການຜ່ອນຜັນດ້ານພາສີ, ອາກອນ ແລະ ພັນທະຕ່າງໆ**

ແຂວງ ຄົ້ນຄວ້າ, ພິຈາລະນາ ນະໂຍບາຍ ກ່ຽວກັບ ການຜ່ອນຜັນດ້ານພາສີ, ອາກອນ ແລະ ພັນທະ ຕ່າງໆ ໂດຍສອດຄ່ອງກັບກົດໝາຍ ເພື່ອຊຸກຍູ້, ສົ່ງເສີມ ວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ໂດຍສະເພາະແມ່ນຂະແໜງທຸລະກິດ ທີ່ເປັນບູລິມະສິດຂອງແຂວງ ສາມາດເຄື່ອນໄຫວໄດ້ ຢ່າງມີປະສິດ ທິພາບ ແລະ ປະສິດທິຜົນສູງ ຕາມຄວາມເໝາະສົມ.

**ມາດຕາ 18 ການສ້າງຕັ້ງ ແລະ ພັດທະນາຜູ້ປະກອບກິດຈະການ**

ແຂວງ ສົ່ງເສີມ ການສ້າງຕັ້ງ ແລະ ພັດທະນາຜູ້ປະກອບກິດຈະການໃໝ່ ດຳເນີນທຸລະກິດ ຂະ ໜາດນ້ອຍ ແລະ ຂະໜາດກາງ ດ້ວຍການໃຫ້ຄຳປຶກສາ, ຈັດຝຶກອົບຮົມ ໃຫ້ປະຊາຊົນ ແລະ ຜູ້ສົນໃຈ ປະກອບອາຊີບ ໄດ້ຮັບຮູ້, ເຂົ້າໃຈ ແລະ ກຳໄດ້ ຫຼັກການ, ລະບຽບການ ໃນການດຳເນີນທຸລະກິດ, ການ ຄັດເລືອກຂະແໜງອາຊີບ, ການເຂົ້າເຖິງແຫຼ່ງທຶນ ແລະ ການບໍລິຫານ ແນໃສ່ຮັບປະກັນຜົນປະໂຫຍດທາງ ດ້ານເສດຖະກິດ ໃຫ້ມີຜົນກຳໄລ ແລະ ເສຍພັນທະໃຫ້ລັດຢ່າງຄົບຖ້ວນຕາມກົດໝາຍ.

**ມາດຕາ 19 ການເຂົ້າເຖິງການບໍລິການໃຫ້ຄຳປຶກສາ**

ແຂວງ ສ້າງໂອກາດ ໃຫ້ປະຊາຊົນ ແລະ ຜູ້ດຳເນີນ ວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ເຂົ້າເຖິງ ການບໍລິການໃຫ້ຄຳປຶກສາ ດ້ວຍການສ້າງຕັ້ງໜ່ວຍງານໃຫ້ຄຳປຶກສາປະຈຳຂະແໜງອຸດສາຫະກຳ ແລະ ການຄ້າຂັ້ນແຂວງ ແລະ ເມືອງ ຫຼື ຈັດຊຸດຝຶກອົບຮົມຮອບດ້ານ ກ່ຽວກັບການສ້າງຕັ້ງ, ການບໍລິຫານ, ການດຳເນີນທຸລະກິດ ຂອງວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ຢ່າງເປັນປົກກະຕິ.

**ມາດຕາ 20 ການເພີ່ມຜະລິດຕະພາບ, ເຕັກນິກ, ເຕັກໂນໂລຊີ ແລະ ນະວັດຕະກຳ**

ແຂວງ ສົ່ງເສີມ ການປັບປຸງ, ຍົກລະດັບ ຄຸນນະພາບການບໍລິຫານ ໃນການດຳເນີນທຸລະກິດ ຂອງ ວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ດ້ວຍການຈັດຝຶກອົບຮົມ ກ່ຽວກັບການເພີ່ມຜະລິດຕະ ພາບ, ເຕັກນິກ, ເຕັກໂນໂລຊີ ແລະ ນະວັດຕະກຳ ເພື່ອຮັບປະກັນໃຫ້ ການຜະລິດ, ການປຸງແຕ່ງ, ການຄ້າ ແລະ ການບໍລິການ ສາມາດແຂ່ງຂັນ ທາງດ້ານລາຄາ, ປະລິມານ ແລະ ຄຸນນະພາບ ໂດຍຕອບສະໜອງ ຕາມຄວາມຕ້ອງການ ຂອງຕະຫຼາດ ແລະ ຜູ້ບໍລິໂພກ ພາຍໃນແຂວງ, ຕ່າງແຂວງ ແລະ ຕ່າງປະເທດ.

**ມາດຕາ 21 ການເຂົ້າເຖິງ ແລະ ຂະຫຍາຍຕະຫຼາດ**

ແຂວງ ສົ່ງເສີມ ວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ເຂົ້າເຖິງ ແລະ ຂະຫຍາຍຕະຫຼາດ ດ້ວຍການສ້າງ ຫຼື ສະໜອງ ຂໍ້ມູນ-ຂ່າວສານ, ການຈັດຝຶກອົບຮົມດ້ານການຕະຫຼາດ, ການຈັດງານວາງສະ ແດງສິນຄ້າ, ງານຕະຫຼາດນັດ, ການຈັດຄະນະຜູ້ແທນ ໄປທັດສະນະສຶກສາ, ແລກປ່ຽນບົດຮຽນ ດ້ານການ ຕະຫຼາດ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມຄວາມເໝາະສົມ.

ມາດຕາ 22 ການປົກປ້ອງລາຄາສິນຄ້າ ແລະ ຄ່າບໍລິການ

ແຂວງ ໃຫ້ການປົກປ້ອງລາຄາສິນຄ້າ ທີ່ຜະລິດໂດຍກົງ ແລະ ຄ່າບໍລິການ ທີ່ເປັນບູລິມະສິດ ຂອງ ແຂວງ ດ້ວຍການສ້າງນິຕິກຳໃຕ້ກົດໝາຍ, ມາດຕະການປົກປ້ອງສະເພາະ ເພື່ອເຮັດໃຫ້ວິສາຫະກິດທີ່ ກ່ຽວຂ້ອງ ສາມາດແຂ່ງຂັນ ແລະ ຕອບສະໜອງ ຕໍ່ຄວາມຕ້ອງການຂອງຕະຫຼາດ ແລະ ຜູ້ບໍລິໂພກ **(ມີເອກະສານຊ້ອນທ້າຍ "ບັນຊີ-ກ 2019").**

## ໝວດທີ V
## ຂໍ້ຫ້າມ

**ມາດຕາ 23 ຂໍ້ຫ້າມ ສຳລັບ ເຈົ້າໜ້າທີ່ພະນັກງານ ແລະ ການຈັດຕັ້ງລັດ**

ຫ້າມ ເຈົ້າໜ້າທີ່ພະນັກງານ ແລະ ການຈັດຕັ້ງລັດ ມີພຶດຕິກຳ ດັ່ງນີ້:

1. ກົດໜ່ວງ, ຖ່ວງດຶງ ຫຼື ຂັດຂວາງ ບຸກຄົນ, ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ທີ່ຂໍອະນຸມັດລົງທຶນ ເພື່ອດຳເນີນວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ຢ່າງເດັດຂາດ;
2. ປອມແປງ, ບິດເບືອນ ຂໍ້ມູນ ຂອງບຸກຄົນ, ນິຕິບຸກຄົນ ໃນການຂໍສ້າງຕັ້ງວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ທີ່ບໍ່ຄົບເງື່ອນໄຂ ຫຼື ມາດຕະຖານ ທີ່ກົດໝາຍ ຫຼື ນິຕິກຳໃຕ້ກົດໝາຍ ກຳນົດໄວ້;
3. ສວຍໃຊ້ ໜ້າທີ່, ຕຳແໜ່ງ ເພື່ອຮຽກສິນບົນ ຫຼື ສະແຫວງຫາຜົນປະໂຫຍດສ່ວນຕົວ ຈາກວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ຢ່າງເດັດຂາດ;
4. ເປີດເຜີຍຄວາມລັບ ຫຼື ຂໍ້ມູນ ອັນເປັນການສ້າງຄວາມເສຍຫາຍ ໃຫ້ແກ່ ວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງໃດໜຶ່ງ;
5. ໃສ່ຮ້າຍ, ປ້າຍສີ ຫຼື ໃຫ້ຂໍ້ມູນເທັດ ເພື່ອທັບຖົມ ແລະ ທຳລາຍ ວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງໃດໜຶ່ງ ເພື່ອຜົນປະໂຫຍດສ່ວນຕົວ ຫຼື ກຸ່ມຄົນໃດໜຶ່ງ;
6. ສວຍໃຊ້ ໜ້າທີ່, ຕຳແໜ່ງ ກ້າວກ່າຍ ວຽກງານສົ່ງເສີມ ວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ເພື່ອຫວັງຜົນປະໂຫຍດສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງ ແລະ ກຸ່ມຄົນໃດໜຶ່ງ;
7. ທວງ, ຂໍ ແລະ ຮັບ ສິນບົນ ຫຼື ຊຸບສິ່ງຂອງ ຈາກຜູ້ດຳເນີນ ທຸລະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ຢ່າງເດັດຂາດ;
8. ປະລະ ໜ້າທີ່ ແລະ ຄວາມຮັບຜິດຊອບ ກ່ຽວກັບ ວຽກງານສົ່ງເສີມ ວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ທີ່ການຈັດຕັ້ງມອບໝາຍໃຫ້;
9. ມີການກະທຳ, ເມີນເສີຍ ຫຼື ພຶດຕິກຳອື່ນ ທີ່ລະເມີດກົດໝາຍ ແລະ ຂໍ້ຕົກລົງສະບັບນີ້.

**ມາດຕາ 24 ຂໍ້ຫ້າມ ສຳລັບ ຜູ້ດຳເນີນວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ**

ຫ້າມ ຜູ້ດຳເນີນວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ມີພຶດຕະກຳ ດັ່ງນີ້:

1. ລາຍງານ ຂໍ້ມູນເທັດ ໃນການປະກອບເອກະສານ ເພື່ອສະເໜີສ້າງຕັ້ງ ວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ;
2. ປອມແປງເອກະສານ ຫຼື ລາຍງານຂໍ້ມູນເທັດເພື່ອຫຼົບຫຼີກການເສຍພາສີ, ອາກອນ ແລະ ພັນທະອື່ນໆ;
3. ໂຄສະນາໃສ່ຮ້າຍປ້າຍສີ ຫຼື ບິດເບືອນ ຂໍ້ມູນ ທັບຖົມ ແລະ ສ້າງຄວາມເສຍຫາຍໃຫ້ ຜູ້ດຳເນີນວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງດ້ວຍກັນ ເພື່ອຫວັງຜົນປະໂຫຍດຂອງຕົນ ໂດຍເຈດຕະນາ;
4. ໃຫ້ສິນບົນ ຫຼື ຊຸບສິ່ງຂອງ ຕໍ່ເຈົ້າໜ້າທີ່ພະນັກງານ ຫຼື ການຈັດຕັ້ງ ເພື່ອປົກປ້ອງ ຜົນປະໂຫຍດທີ່ບໍ່ຊອບທຳຂອງຕົນ;
5. ມີການກະທຳ ຫຼື ພຶດຕິກຳອື່ນ ທີ່ລະເມີດ ກົດໝາຍ ແລະ ຂໍ້ຕົກລົງສະບັບນີ້.

## ໝວດທີ VI
## ນະໂຍບາຍຕໍ່ ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 25 ນະໂຍບາຍ ຕໍ່ຜູ້ມີຜົນງານ**

ບຸກຄົນ ແລະ ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນ ເຄື່ອນໄຫວການຈັດປະຕິບັດວຽກງານສົ່ງເສີມ ວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆ ຕາມຄວາມເໝາະສົມ.

**ມາດຕາ 26 ມາດຕະການ ຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດ ທີ່ລະເມີດ ຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ຖືກກ່າວເຕືອນ, ລົງວິໄນ, ຖືກປັບໃໝ ຫຼື ຖືກຟ້ອງຂຶ້ນສານ ຕາມຖານໜັກ ຫຼື ເບົາ ທີ່ກົດໝາຍ ໄດ້ກຳນົດໄວ້.

## ໝວດທີ VII
## ບົດບັນຍັດສຸດທ້າຍ

**ມາດຕາ 27 ການຈັດຕັ້ງປະຕິບັດ**

ບັນດາພະແນກການ, ອົງການຈັດຕັ້ງຕ່າງໆທັງພາຍໃນ ແລະ ຕ່າງປະເທດ, ເມືອງ, ບ້ານ, ບຸກຄົນ, ນິຕິບຸກຄົນ ທີ່ເຄື່ອນໄຫວດຳເນີນ ວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ຢູ່ ແຂວງຊຽງຂວາງ ຈົ່ງພ້ອມກັນຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 28 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ ລົງລາຍເຊັນ ແລະ ພາຍຫຼັງ ສິບຫ້າ ວັນ ນັບແຕ່ວັນພິມລົງຈົດໝາຍເຫດ ທາງລັດຖະການເປັນຕົ້ນໄປ.

ຂໍ້ຕົກລົງ ຫຼື ຄຳສັ່ງສະບັບໃດ ທີ່ຂັດກັບ ຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ເຈົ້າແຂວງ

ບຸນຕົ້ນ ຈັນທະພອນ